ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 13 ຫາ 17 ກຸມພາ 2023




ຫ້ອງການກະຊວງກະສິກຳ ແລະ ປ່າໄມ້

# ຊົມເຊີຍຜົນສຳເລັດກອງປະຊຸມສະຫຼຸບ ວຽກງານ ກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ປະຈຳປີ 2022

ກອງປະຊຸມ ສະຫຼຸບວຽກງານ ກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ປະຈຳປີ 2022 ໄດ້ຈັດຂຶ້ນ ໃນລະຫວ່າງວັນທີ 7-8 ກຸມພາ 2023 ພາຍໃຕ້ການເປັນປະທານເປີດກອງປະຊຸມ ຂອງ ທ່ານ ປອ ເພັດ ພົມພິພັກ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ເຂົ້າຮ່ວມກອງປະຊຸມມີ ບັນດາທ່ານຮອງລັດຖະມົນຕີ ຈາກບັນດາກະຊວງ ແລະ ອົງການທຽບເທົ່າກະຊວງ, ຮອງເຈົ້າແຂວງ ແລະ ຮອງເຈົ້າຄອງນະຄອນຫຼວງວຽງຈັນ, ບັນດາກົມ, ພະແນກ ກະສິກຳ ແລະ ປ່າໄມ້ ແຂວງ ແລະ ນະຄອນຫຼວງວຽງຈັນ ຜູ້ປະກອບການຈາກ 6 ບໍລິສັດ ລວມທັງໝົດ ຈຳນວນ 270 ທ່ານ, ຍິງ 57 ທ່ານ, ໃນນັ້ນ ຈາກສູນກາງ 221 ທ່ານ ແລະ ທ້ອງຖິ່ນ 49 ທ່ານ.

ກອງປະຊຸມໄດ້ ສະຫຼຸບຕີລາຄາ ການຈັດຕັ້ງປະຕິບັດແຜນພັດທະນາກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ປະຈຳປີ 2022 ແລະ ທິດທາງແຜນການປີ 2023 ແລະ ການຈັດຕັ້ງວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ. ນອກນັ້ນ, ກອງປະຊຸມຍັງໄດ້ ຮັບຟັງການປະກອບຄຳເຫັນກ່ຽວກັບ ຂໍ້ສະເໜີ ແລະ ບົດແນະນຳຈາກ 14 ເອກະສານຂອງກົມວິຊາການ ຂອງກະຊວງກະສິກຳ ແລະ ປ່າໄມ້ ແລະ ການປະກອບຄຳເຫັນຂອງພາກເອກະຊົນຈຳນວນ 4 ບໍລິສັດ ແລະ 2 ສະຫະກອນ (ສະຫະກອນ 3F ແລະ ສະຫະກອນກະສິກຳອິນຊີທີ່ງມັ່ງ), ເຊິ່ງສາມາດຕີລາຄາ ກ່ຽວກັບຜົນສຳເລັດທີ່ພົ້ນເດັ່ນ, ຂໍ້ຄົງຄ້າງ, ບົດຮຽນທີ່ຖອດຖອນໄດ້ ແລະ ຍົກໃຫ້ເຫັນມາດຕະການ ແລະ ວິທີແກ້ໄຂ ຕາມ 4 ແຜນງານຂອງກະຊວງກະສິກຳ ແລະ ປ່າໄມ້.




ທ່ານ ປອ ເພັດ ພົມພິພັກ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້
ຂຶ້ນລາຍງານຜົນກອງປະຊຸມ ຕໍ່ທ່ານນາຍົກລັດຖະມົນຕີ ໃນກອງປະຊຸມ ສະຫຼຸບວຽກງານກະສິກຳ,
ປ່າໄມ້ ແລະ ພັດທະນາຊົນນະບົດ ປະຈຳປີ 2022 ລະຫວ່າງວັນທີ 7-8 ກຸມພາ 2023
ທີ່ ສູນການຮ່ວມມືສາກົນ ແລະ ການຝຶກອົບຮົມ ICTC ນະຄອນຫຼວງວຽງຈັນ

ທ່ານ ປອ ເພັດ ພົມພິພັກ ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ໄດ້ສະຫຼຸບລາຍງານກ່ຽວກັບກອງປະຊຸມຄັ້ງນີ້ວ່າ: ການສະຫຼຸບຕີລາຄາ ການຈັດຕັ້ງປະຕິບັດແຜນພັດທະນາ ກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດໃນປີຜ່ານມາ ໂດຍການຍົກບັນຫາເຈາະຈົ້ມ ກ່ຽວກັບການປະຕິບັດໜ້າທີ່ການເມືອງຂອງທົ່ວຂະແໜງການກະສິກຳ ແລະ ປ່າໄມ້ ເຖິງຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ຍົກໃຫ້ເຫັນມາດຕະການ ແລະ ວິທີແກ້ໄຂ ແມ່ນເພື່ອໃຫ້ປີ 2023 ພວກເຮົາໃຫ້ສາມາດຍາດໄດ້ຜົນງານ ແລະ ໄດ້ຮັບຜົນສຳເລັດດີ ກວ່າເກົ່າ. ກອງປະຊຸມຄັ້ງນີ້ໄດ້ລົງເລິກ ປຶກສາຫາລືກ່ຽວກັບກົນໄກການສົ່ງເສີມການຜະລິດເພື່ອທົດແທນການນຳເຂົ້າ ແລະ ເປັນສິນຄ້າສົ່ງອອກ ແລະ ການກຳນົດບັນຊີສິນຄ້າທົດແທນການນຳເຂົ້າ, ຊຶ່ງເຫັນວ່າຍັງມີຫຼາຍບັນຫາທີ່ພວກເຮົາບໍ່ສາມາດບັນລຸໄດ້ ເປັນຕົ້ນແມ່ນ ການຜະລິດປັດໃຈການຜະລິດ (ຝຸ່ນ, ທົວອາຫານສັດເປັນຕົ້ນ) ແມ່ນຍັງບໍ່ທັນຕອບສະໜອງຕໍ່ຄວາມຕ້ອງການຊົມ



ໃຊ້ພາຍໃນ, ມີລາຄາສູງ ແລະ ຂອດການສົ່ງອອກຍັງຂາດການປະສານງານ ລະຫວ່າງ ຂະແໜງການເຮັດໃຫ້ການສົ່ງອອກຍັງມີຄວາມຫຍຸ້ງຍາກ; ດ້ານວຽກງານຄຸ້ມຄອງປ່າໄມ້ ລັດຖະບານໄດ້ກໍານົດຄາດໝາຍໄວ້ 70 ສ່ວນຮ້ອຍ ຂອງພື້ນທີ່ປ່າປົກຫຸ້ມປ່າໄມ້ ເຊິ່ງໄດ້ກາຍເປັນທ່າແຮງທີ່ຈະສາມາດສ້າງລາຍຮັບສູງຈາກປ່າໄມ້ໄດ້ (ຊັບພະຍາກອນປ່າໄມ້, ເປັນເຂດທ່ອງທ່ຽວ, ເປັນຕະຫຼາດຊື້-ຂາຍກາກບອນໄດ້ອີກ). ຕໍ່ໜ້າແມ່ນຕ້ອງສືບຕໍ່ປັບປຸງໂຮງງານປຸງແຕ່ງກະສິກໍາ ແລະ ການຄ້າ ໃຫ້ສອດຄ່ອງກັບຄວາມສາມາດຕົວຈິງ ໃນການສະໜອງວັດຖຸດິບສົ່ງເຂົ້າ ແລະ ສົ່ງອອກ ໂດຍສຸມໃສ່ກໍານົດແບ່ງເຂດການຜະລິດວັດຖຸດິບທີ່ຊັດເຈນ, ຊຸກຍູ້-ສົ່ງເສີມ ການຈັດຕັ້ງການຜະລິດວັດຖຸດິບ ໃຫ້ຮັບປະກັນການສະໜອງວັດຖຸດິບ, ໂດຍສະເພາະ ສຸມໃສ່ການຜະລິດທົ່ວອາຫານສັດ ແລະ ຝຸ່ນຊີວະພາບໃຫ້ພຽງພໍຕໍ່ຄວາມຕ້ອງການພາຍໃນ.

ຜ່ານການປະຊຸມປຶກສາຫາລືດ້ວຍບັນຍາກາດຟົດຟື້ນ ແລະ ດ້ວຍຄວາມຮັບຜິດຊອບສູງ, ຊຶ່ງມີຜູ້ປະກອບຄໍາເຫັນຈາກທ້ອງຖິ່ນ ແລະ ສູນກາງ. ຈາກບັນດາຮອງລັດຖະມົນຕີ, ບັນດາຮອງເຈົ້າແຂວງ ແລະ ຫົວໜ້າພະແນກ ກະສິກໍາ ແລະ ປ່າໄມ້ ໄດ້ມີຄໍາເຫັນກ່ຽວກັບບັນຫາຕ່າງໆ ທີ່ສະສົມມາ ແລະ ເປັນສິ່ງອຸດຕັນໃຫ້ແກ່ຂະແໜງກະສິກໍາ, ປ່າໄມ້ ທີ່ພວກເຮົາແກ້ໄຂຍັງບໍ່ໄດ້, ພ້ອມດຽວກັນນີ້ ກອງປະຊຸມຍັງໄດ້ມີຄວາມເປັນເອກະພາບ ແລະ ຕົກລົງບາງວຽກງານສໍາຄັນ ຄື:

1. ໄດ້ເປັນເອກະພາບຕໍ່ກັບການຕີລາຄາຜົນສໍາເລັດ, ດ້ານຄົງຄ້າງ, ສາເຫດ ແລະ ບົດຮຽນທີ່ຖອດຖອນໄດ້ ຕໍ່ການຈັດຕັ້ງປະຕິບັດແຜນພັດທະນາກະສິກໍາ, ປ່າໄມ້ ແລະ ພັດທະນາຊົນນະບົດ ປີ 2022 ແລະ ພ້ອມກັນນັ້ນ, ເຫັນດີຈະໄດ້ພ້ອມກັນ ສຸມໃສ່ຈັດຕັ້ງປະຕິບັດທິດທາງ ແລະ ບັນດາຄາດໝາຍ ທີ່ກໍານົດໄວ້ ຕາມເນື້ອໃນ 4 ແຜນງານ ໃນປີ 2023.

2. ການຈັດຕັ້ງວາລະແຫ່ງຊາດ ແມ່ນໃຫ້ເພີ່ມທະວີຄວາມເອົາໃຈໃສ່ການຊຸກຍູ້ສົ່ງເສີມການຜະລິດພາຍໃນໃຫ້ເຂັ້ມແຂງ ໂດຍສະເພາະ ເລັ່ງໃສ່ຊຸກຍູ້ ການຜະລິດປັດໄຈການຜະລິດ ໃຫ້ສາມາດຕອບສະໜອງຕໍ່ຄວາມຕ້ອງການ (ຝຸ່ນ, ທົ່ວອາຫານສັດ.....) ແລະ ສົ່ງເສີມການຜະລິດກະສິກໍາ ທີ່ມີທ່າແຮງ ແລະ ຕະຫຼາດຮອງຮັບ ເພື່ອສົ່ງອອກດ້ວຍຮູບແບບ ການຈັດຕັ້ງກຸ່ມການຜະລິດ, ສະມາຄົມ ແລະ ສະຫະກອນ.

3. ວຽກງານການຜະລິດເປັນສິນຄ້າ ກໍຄືວຽກງານປຸງແຕ່ງກະສິກໍາ ແລະ ປ່າໄມ້ ເຫັນວ່າຍັງມີບາງຂອດທີ່ຈະຕ້ອງໄດ້ຕົກລົງເປັນເອກະພາບກັບຂະແໜງການອຸດສາຫະກໍາ ແລະ ການຄ້າ ເປັນຕົ້ນບັນດາລາຍການທີ່ຈະຕ້ອງໄດ້ມອບໂອນ ເພື່ອເຮັດໃຫ້ການດັດສົມໂຮງງານ ສອດຄ່ອງກັບຄວາມສາມາດຕົວຈິງ ໃນການສະໜອງວັດຖຸດິບສົ່ງເຂົ້າ-ສົ່ງ



ອອກ ການສະໜອງວັດຖຸດິບໃຫ້ໂຮງງານ ເວົ້າລວມ ຕ້ອງໄດ້ເອົາໃຈໃສ່ຕື່ມ ຂອດການຜະລິດວັດຖຸດິບ-ການປຸ່ງແຕ່ງ ຕິດພັນກັບການຕະຫຼາດ.

4. ວຽກງານປ່າໄມ້ ກອງປະຊຸມໄດ້ຍົກໃຫ້ເຫັນບາງບັນຫາ ກ່ຽວກັບ ການບຸກລຸກປ່າໄມ້ ໂດຍສະເພາະໃນເຂດ 3 ປະເພດປ່າ, ການຄຸ້ມຄອງໂຮງງານປຸງແຕ່ງໄມ້, ການປູກໄມ້ ຕ້ອງໄດ້ເອົາໃຈໃສ່ໃນການປົກປັກຮັກສາປ່າໄມ້ ຕິດພັນ ກັບການສ້າງລາຍຮັບຈາກສິນເຊື່ອກາກບອນ ແລະ ການທ່ອງທ່ຽວທຳມະຊາດ ເພື່ອສ້າງວຽກເຮັດງານທຳໃຫ້ກັບຄົນທ້ອງຖິ່ນ.

5. ວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ເຫັນວ່າຂອດການປະສານງານກັບຂະແໜງການອື່ນ ຍັງບໍ່ທັນໂລ່ງລ່ຽນ ເຊິ່ງຜູ້ແທນກອງປະຊຸມແມ່ນເຫັນດີໃຫ້ລົງເລິກ ປະເມີນຄືນ ດຳລັດ 348/ນຍ ໃນບາງເຂດ ເພາະຕົວຊີ້ວັດ ຕົວເມືອງ ກັບຊົນນະບົດແຕກຕ່າງກັນ ໂດຍການປະສານສົມທົບກັບບັນດາຂະແໜງການ, ທ້ອງຖິ່ນສ້າງແຜນການຊຸກຍູ້, ຕິດຕາມ, ກວດກາ, ການຈັດຕັ້ງປະຕິບັດວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ຕາມຄຳສັ່ງຂອງກົມການເມືອງສູນກາງພັກ ເລກທີ 097/ກມສພ, ກົດໝາຍຈັດສັນພູມລຳເນົາ ແລະ ອາຊີບ ເລກທີ 45/ສພຊ, ດຳລັດ 348/ລບ.

6. ນອກນັ້ນ, ກອງປະຊຸມໄດ້ຍົກປະເດັນບັນຫາ ຂັ້ນຂອດການລົງທຶນ ໃນຂະແໜງກະສິກຳ ແລະ ປ່າໄມ້ ໂດຍໃຫ້ກະຊວງຄົ້ນຄວ້າ ປັບປຸງ ແລະ ຫຼຸດຂັ້ນຂອດຕ່າງໆ ເພື່ອອຳນວຍຄວາມສະດວກໃຫ້ຜູ້ປະກອບການ ເຂົ້າມາລົງທຶນໃນຂະແໜງການໃຫ້ຫຼາຍຂຶ້ນ.

ເຊິ່ງກອງປະຊຸມຄັ້ງນີ້ຍັງໄດ້ຮັບກຽດໂອ້ລົມ ແລະ ໃຫ້ທິດຊີ້ນຳຂອງ ທ່ານ ສອນໄຊ ສີພັນດອນ ນາຍົກລັດຖະມົນຕີ ເຊິ່ງທ່ານໄດ້ເນັ້ນໃນຫຼາຍໆບັນຫາທີ່ຕິດພັນກັບຂະແໜງກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ເພື່ອເປັນທິດທາງໃຫ້ແກ່ຜູ້ແທນກອງປະຊຸມ ໄດ້ນຳໄປຈັດຕັ້ງຜັນຂະຫຍາຍ ຕາມຄວາມຮັບຜິດຊອບທັງຂັ້ນສູນກາງ ແລະ ທ້ອງຖິ່ນຕົນໃຫ້ຖືກຕ້ອງ ແລະ ໄດ້ຮັບຜົນ.

ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ນ. ສຸດາຄຳ ພິມມະສອນ

ບັນນາທິການ:
ທ່ານ ກິດຊະນະ ພິມມະຈັນ
ທ່ານ ໂຊລາ ສິມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳມອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;